ກອງທຶນພັດທະນາປ່າໄມ້ ແລະ
ຊັບພະຍາກອນປ່າໄມ້
ເລກທີ: 104
ວັນທີ: 13/1/09
ເວລາ........

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----------=000=----------

ກະຊວງການເງິນ

ເລກທີ 0092 /ກງ.

ນະຄອນຫຼວງວຽງຈັນ, ວັນທີ 13 JAN 2009

# ບົດແນະນຳ

## ການຄຸ້ມຄອງ ເກັບລາຍຮັບ
## ທີ່ໄດ້ຈາກການຂາຍໄມ້ ແລະ ເຄື່ອງປ່າຂອງດົງ.

- ອີງຕາມ ກົດໝາຍວ່າດ້ວຍຊັບສິນຂອງລັດ ສະບັບເລກທີ 09/ສພຊ ລົງວັນທີ 12/10/2002.
- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ສະບັບປັບປຸງ) ສະບັບເລກທີ 02/ສພຊ ລົງວັນທີ 26/12/2006.
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 17/ນຍ ລົງວັນທີ 22/09/2008 ກ່ຽວກັບ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານ ໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້.

ເພື່ອເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ ໄດ້ຈັດຕັ້ງປະຕິບັດຢ່າງມີປະສິດທິຜົນສູງ ແລະ ທັງເປັນການຄຸ້ມຄອງ ການເກັບລາຍຮັບ ຈາກການຂາຍໄມ້ທຸກປະເພດ ລວມສູນຢູ່ບັນຊີຂອງລັດຖະບານ ຕາມລະບຽບກົດໝາຍ ຂອງງົບປະມານແຫ່ງລັດ.

### ລັດຖະມົນຕີວ່າການກະຊວງການເງິນ ອອກບົດແນະນຳ ດັ່ງນີ້:

1. ມອບໃຫ້ພະແນກການເງິນ ປະຈຳຢູ່ນະຄອນຫລວງ, ແຂວງ ຊີ້ນຳຫ້ອງການຄຸ້ມຄອງຊັບສິນຂອງລັດ ປະສານສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້, ເພື່ອຕິດຕາມເອົາຂໍ້ມູນການ ລາຍງານຕົວຈິງ ການຂຸດຄົ້ນໄມ້ທັງໝົດຢູ່ສະໜາມ I ແລະ ບັນຊີຈັດປະເພດໄມ້ ຢູ່ສະໜາມ II ໃນການຕິດຕາມລາຍຮັບ ຈາກການຂາຍໄມ້ ໃຫ້ຖືກຕ້ອງກັບໂກຕ້າທີ່ລັດຖະບານ ໄດ້ອະນຸມັດໃຫ້ຂຸດຄົ້ນ ປະຈຳປີ.
2. ມອບໃຫ້ກົມຄຸ້ມຄອງຊັບສິນຂອງລັດ ຊີ້ນຳ, ການຂາຍໄມ້ ໃຫ້ຫ້ອງການຄຸ້ມຄອງຊັບສິນຂອງລັດ ປະຈຳນະຄອນຫລວງ, ແຂວງປະຕິບັດຕາມລະບຽບການ ກ່ຽວກັບ ລະບຽບການຊື້-ຂາຍໄມ້ຢູ່ສະໜາມ II ຂອງກະຊວງອຸດສາຫະກຳ-ການຄ້າ ສະບັບເລກທີ 1862-1863/ກອຄ.ກຊອ ລົງວັນທີ 5/11/2008 ໃຫ້ປະສານສົມທົບ ແລະ ດຳເນີນການ ດັ່ງນີ້:

   1) ໃຫ້ກົມຄຸ້ມຄອງຊັບສິນຂອງລັດ ພະແນກການເງິນແຂວງ (ຫ້ອງການຄຸ້ມຄອງຊັບສິນຂອງລັດ) ເປັນຜູ້ຕິດຕາມ, ກວດກາການຈັດຕັ້ງປະຕິບັດ ສັນຍາຊື້-ຂາຍໄມ້ ຕາມຂັ້ນຕອນເຊັ່ນ: ການເຂົ້າຮ່ວມໃນການ

ປະມູນ ຫລື ການທາບທາມລາຄາຊື້-ຂາຍ, ການເກັບລາຍຮັບຈາກການຂາຍໄມ້ ແລະ ອອກໃບຢັ້ງຢືນການຊຳລະເງິນຂາຍໄມ້ ກ່ອນຈະມີການເຄື່ອນຍ້າຍໄມ້ທ່ອນ ຈາກສະໜາມ II ໄປຍັງສະໜາມ III.

2) ໃຫ້ດຳເນີນການຈົດທະບຽນສັນຍາຊື້-ຂາຍໄມ້ ສຳລັບໂຄງການກໍ່ສ້າງພື້ນຖານໂຄງລ່າງຂະໜາດໃຫຍ່ຂອງລັດຖະບານ ຢູ່ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ. ແຕ່ສຳລັບໂຄງການທີ່ເຄື່ອນໄຫວ ຢູ່ນະຄອນຫລວງວຽງຈັນ, ແຂວງ ແມ່ນໃຫ້ເອົາສັນຍາຊື້-ຂາຍໄມ້ແຕ່ລະສະບັບ ຈົດທະບຽນ ຢູ່ຫ້ອງການຄຸ້ມຄອງຊັບສິນຂອງລັດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

3) ຫ້ອງການຄຸ້ມຊັບສິນຂອງລັດ ຕ້ອງສົ່ງສັນຍາຊື້-ຂາຍໄມ້ແຕ່ລະສະບັບ ທີ່ເປັນບັວງໄມ້ຂອງສູນກາງ ອັດສຳເນົາ 1 ຊຸດ ສົ່ງໃຫ້ກົມຄຸ້ມຄອງຊັບສິນຂອງລັດ ບໍ່ເກີນ 15 ວັນ ຫຼັງຈາກຈົດທະບຽນ.

4) ການກຳນົດລາຄາຊື້-ຂາຍໄມ້, ໃນສັນຍາ ຕ້ອງລວມທັງພັນທະຕ່າງໆ ທີ່ຕ້ອງມອບເຂົ້າງົບປະມານ ບົນພື້ນຖານການປະສານສົມທົບ ກັບ ພະແນກອຸດສາຫະກຳ-ການຄ້ານະຄອນຫລວງ, ແຂວງ ເພື່ອແຍກອອກແຕ່ລະປະເພດພັນທະ ເຊັ່ນ: ຄ່າພັນທະໄມ້, ຄ່າບູລະນະປ່າໄມ້, ຄ່າພັນທະປູກປ່າ, ຄ່າສຳຫຼວດປ່າໄມ້ ແລະ ການເກັບອາກອນແຕ່ລະປະເພດນັ້ນ ແມ່ນໃຫ້ປະຕິບັດຕາມບົດແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍສ່ວຍສາອາກອນ ແຕ່ລະໄລຍະ.

5) ເກັບຄ່າຊັກພິເສດ 30 % ຂອງການສົ່ງອອກໄມ້ແປຮູບເນື້ອອ່ອນທຸກປະເພດ ຕາມແຈ້ງການ ສະບັບເລກທີ 1227/ຄລບ ລົງວັນທີ 17/7/2008 ແລະ ແຈ້ງການ ເລກທີ 0896/ກພສ ລົງວັນທີ 17/3/2008 ຂອງກົມພາສີ.

6) ການຈັດຕັ້ງປະຕິບັດ ສັນຍາຊື້-ຂາຍໄມ້ທີ່ລົບລ້າງສັນຍາ ໃນກໍລະນີທີ່ຜູ້ຊື້ ບໍ່ປະຕິບັດຕາມສັນຍາ, ບໍ່ມອບເງິນເຂົ້າງົບປະມານ, ລະເມີດລະບຽບກົດໝາຍ ຫລື ໃນກໍລະນີອື່ນໆ, ໃຫ້ຫ້ອງການຄຸ້ມຄອງຊັບສິນຂອງລັດ ແຕ່ລະແຂວງ ແລະ ລາຍງານໃຫ້ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນຊາບ ເພື່ອເປັນຂໍ້ມູນລາຍງານຂັ້ນເທິງ ກ່ຽວກັບ ການເກັບລາຍຮັບ ຈາກການຂາຍໄມ້.

3. ການຕິດຕາມ ກວດກາການປະຕິບັດສັນຍາຊື້-ຂາຍໄມ້ ໃຫ້ປະຕິບັດຕາມຂໍ້ທີ 16.3 ວັກເລີ່ມ 2. ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 17/ນຍ ລົງວັນທີ 22/9/2008 ກ່ຽວກັບ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານ ໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້. ພ້ອມທັງມອບໃຫ້ຂະແໜງຄຸ້ມຄອງຊັບສິນຂອງລັດ ປະຕິບັດ ດັ່ງນີ້ :

1) ມີໜ້າທີ່ຈັດຕັ້ງປະຕິບັດ ຕາມມາດຕາ 22 ແລະ ມາດຕາ 23 ຂອງກົດໝາຍວ່າດ້ວຍຊັບສິນຂອງລັດ ກ່ຽວກັບ ການກວດກາ ຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ, ໂດຍໃຫ້ດຳເນີນຕາມພາລະບົດບາດ, ຂອບເຂດສິດຂອງຕົນ.

2) ກວດກາ ການປະຕິບັດສັນຍາຊື້-ຂາຍໄມ້, ໃບຢັ້ງຢືນຮັບເງິນ ລວມທັງເອກະສານທີ່ກ່ຽວຂ້ອງ, ເຊິ່ງຜູ້ຖືກກວດກາ ຕ້ອງໃຫ້ຄຳອະທິບາຍຢ່າງຈະແຈ້ງ ຫຼື ສະແດງຫຼັກຖານທີ່ເຫັນວ່າມີຄວາມຈຳເປັນ ກ່ຽວກັບ ການຊື້-ຂາຍໄມ້ ຕໍ່ພະນັກງານຊັບສິນຂອງລັດ ເພື່ອຮັບປະກັນການປະຕິບັດສັນຍາ ຊື້-ຂາຍມີຄວາມຖືກຕ້ອງຕາມລະບຽບກົດໝາຍ ແລະ ເນື້ອໃນຂອງສັນຍາ.

3) ປະສານສົມທົບ ກັບ ຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນຂະແໜງກະສິກຳ-ປ່າໄມ້, ຂະແໜງອຸດສາຫະກຳການຄ້າ ແລະ ພາກສ່ວນທີ່ກ່ຽວຂ້ອງ ຂອງທ້ອງຖິ່ນ ເພື່ອເປັນເອກະພາບ ໃນການຈັດຕັ້ງປະຕິບັດ ແລະ ສະກັດກັ້ນການລັກລອບໄມ້ທີ່ຜິດຕໍ່ລະບຽບກົດໝາຍ ແລະ ມີມາດຕະການດຳເນີນຄະດີ ຕໍ່ຜູ້ລະເມີດ ໂດຍ

ໄວ ແລະ ບໍ່ໃຫ້ແກ່ຍາວເວລາ ເພື່ອສ້າງເງື່ອນໄຂໃຫ້ຜູ້ກະທຳຜິດ ມີຊ່ອງຫວ່າງທີ່ເອື້ອອຳນວຍໃນ ການຫຼຸດພົ້ນ ຈາກການກະທຳຜິດ.

4) ຕໍ່ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດແຜນການຂຸດຄົ້ນໄມ້, ລະບຽບກົດໝາຍແລະ ຂໍ້ຫ້າມຕ່າງໆ ກ່ຽວກັບ ການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ໃນຖານເຈດຕະນາ ໂດຍມີຫຼັກຖານຂອງກາງ ເຊັ່ນ: (ໄມ້ຢຶດ, ໄມ້ທີ່ລັກລອບ, ໄມ້ຕັດເກີນ, ໄມ້ທີ່ຕັດບໍ່ຖືກກຳນົດໝາຍ) ໃຫ້ຮິບຂອງກາງ ມາເປັນ ຊັບສິນຂອງລັດ ແລ້ວສົມທົບກັບພາກສ່ວນກ່ຽວຂ້ອງ ນຳສະເໜີຂັ້ນເທິງຕົກລົງປະມູນຂາຍອອກ ເອົາເງິນເຂົ້າງົບປະມານແຫ່ງຊາດ ເດັດຂາດບໍ່ໃຫ້ຜູ້ກະທຳຜິດ ເຂົ້າຮ່ວມປະມູນ ຫຼື ຊື້ເອົາໄມ້ນັ້ນຄືນ.

5) ການດຳເນີນຄະດີຕໍ່ຜູ້ກະທຳຜິດ ຕ້ອງມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນຄະນະ ເຊັ່ນ ຂະແໜງອຸດສາຫະກຳ-ການຄ້າ, ຂະແໜງກະສິກຳ-ປ່າໄມ້, ຂະແໜງການເງິນ ໃນນາມຜູ້ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ສັນຍາຊື້-ຂາຍໄມ້.

6) ການເຄື່ອນຍ້າຍໄມ້ອອກຈາກສະໜາມ II ຕາມປະເພດໂຄຕ່າໄມ້ ທີ່ລັດຖະບານອະນຸມັດ ເຊັ່ນ: ໂຄຕ່າໄມ້ທີ່ເປັນພູດລາຍຮັບຂອງສູນກາງ, ໂຄຕ່າໄມ້ທີ່ລັດຖະບານອະນຸມັດໃຫ້ສະສາງໜີ້ສິນ ແລະ ອື່ນໆ ຕ້ອງມີໃບຢັ້ງຢືນການຮັບເງິນຈາກການຂາຍໄມ້ ຫຼື ໃນກໍລະນີສະສາງໜີ້ສິນ ຕ້ອງມີເອກະສານອ້າງອີງໃສ່ ໃບຢັ້ງຢືນຮັບເງິນ.

7) ໃຫ້ພະແນກການເງິນແຂວງ (ຫ້ອງການຄຸ້ມຄອງຊັບສິນຂອງລັດ) ເຮັດປຶ້ມຕາຕະລາງຕິດຕາມ ກວດກາການປະຕິບັດສັນຍາຊື້-ຂາຍໄມ້ຢູ່ສະໜາມ II ຈາກພະແນກອຸດສາຫະກຳ-ການຄ້າ ໃຫ້ລະອຽດເອົາເງິນຄ່າພັນທະຂາຍໄມ້ ແລະ ພັນທະຕ່າງໆ ໂດຍໃຫ້ມອບເຂົ້າງົບປະມານ ຫຼັງຈາກເຊັນສັນຍາຊື້-ຂາຍໄມ້ ພາຍໃນກຳນົດ 15 ວັນ, ຖ້າເກີນກຳນົດເວລາ ແມ່ນໃຫ້ພະແນກການເງິນ, (ຫ້ອງການຄຸ້ມຄອງຊັບສິນ ຂອງລັດ) ແຈ້ງເຖິງພະແນກອຸດສາຫະກຳ-ການຄ້າ ເພື່ອລຶບລ້າງສັນຍາຊື້-ຂາຍ ແລະ ດຳເນີນການເຮັດສັນຍາຊື້-ຂາຍ ກັບຜູ້ໃໝ່ ທີ່ມີຈຸດປະສົງຕ້ອງການຊື້ໄມ້ ເພື່ອຮັບປະກັນໄມ້ທີ່ຂຸດຄົ້ນອອກມາໄວ້ຢູ່ສະໜາມ II ຕ້ອງໄດ້ຂາຍ ນຳເງິນເຂົ້າງົບປະມານ ໃຫ້ທັນເວລາ ແລະ ບໍ່ໃຫ້ຊັບພະຍາກອນໄມ້ ເຊື່ອມຄຸນນະພາບ.

8) ທຸກໆທ້າຍເດືອນ ກົມຄຸ້ມຄອງຊັບສິນຂອງລັດ ພະແນກການເງິນແຂວງ, ຫ້ອງການຄຸ້ມຄອງຊັບສິນຂອງລັດ ມີໜ້າທີ່ເລັ່ງທວງເອົາບັນຊີໄມ້ ທີ່ຍັງບໍ່ທັນໄດ້ເຮັດສັນຍາຊື້-ຂາຍໄມ້ ພ້ອມດ້ວຍຄາດຄະເນ ລາຄາຂາຍໄມ້ທັງໝົດທີ່ຍັງຄ້າງ ນຳຂະແໜງອຸດສາຫະກຳ-ການຄ້າ ເພື່ອລາຍງານຂັ້ນເທິງ ກ່ຽວກັບ ມູນຄ່າໄມ້ທີ່ຍັງບໍ່ໄດ້ຂາຍ ຢູ່ສະໜາມ II.

4. ການເກັບລາຍຮັບ ຈາກການຂາຍໄມ້ເຂົ້າງົບປະມານຂອງລັດ ໃຫ້ປະຕິບັດ ດັ່ງນີ້:

1) ການເກັບເງິນຄ່າຊັບພະຍາກອນໄມ້ທຸກປະເພດ ແມ່ນໃຫ້ເກັບເປັນເງິນກີບ ຕາມອັດຕາແລກປ່ຽນ (ອັດຕາຊື້) ຂອງທະນາຄານແຫ່ງ ສປປ ລາວ ໃນເວລາມອບ-ຮັບເງິນ ຈາກການຂາຍໄມ້, ລາຍຮັບຂາຍໄມ້ເປັນລາຍຮັບຂອງສູນກາງ ຕາມມາດຕາ 37 ຂອງກົດໝາຍງົບປະມານ ສະບັບປັບປຸງ ເລກທີ 02/ສພຊ ລົງວັນທີ 26/12/2006 ແລະ ໃຫ້ມອບລວມສູນເຂົ້າບັນຊີຂອງລັດຖະບານ ຢູ່ຄັງເງິນແຫ່ງຊາດ ຫຼື ສາຂາຄັງເງິນແຫ່ງຊາດຢູ່ທ້ອງຖິ່ນ ແລະ ໃຫ້ໂອນເຂົ້າສູນກາງໂດຍທັນທີ ບໍ່ອະນຸຍາດໃຫ້ຂະແໜງການ ຫຼື ພາກສ່ວນໃດໜຶ່ງຂອງສູນກາງ ແລະ ທ້ອງຖິ່ນ ອຳນາດການປົກຄອງແຕ່ລະຂັ້ນ ເປີດບັນຊີລາຍຮັບຂາຍໄມ້ຢູ່ນອກລະບົບງົບປະມານ ແລະ ນຳໃຊ້ເງິນລາຍຮັບຈາກການຂາຍໄມ້ ກ່ອນໄດ້ຮັບອະນຸຍາດ ຈາກລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 20.4 ຄຳສັ່ງ ຂອງນາຍົກລັດຖະມົນຕີ ເລກທີ 17/ນຍ ລົງວັນທີ 22/9/08

ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານ ໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້.

2) ບໍ່ອະນຸຍາດໃຫ້ທ້ອງຖິ່ນ ແລະ ຂະແໜງການໃດ ອອກອະນຸຍາດເອົາໄມ້ ໄປຕຸບກັບໜີ້ສິນຂອງໂຄງການ ໂດຍບໍ່ໄດ້ຜ່ານການປະມູນຂາຍໄມ້ດັ່ງກ່າວນັ້ນ ແລະ ພ້ອມດຽວກັນນັ້ນ ກໍ່ບໍ່ອະນຸຍາດໃຫ້ສ້າງໃບຄິດໄລ່ພັນທະໄມ້ຕາມບັນຊີໄມ້ ທີ່ເຮັດສັນຍາຊື້-ຂາຍໄມ້ ກັບ ນັກທຸລະກິດ ເພື່ອເອົາເງິນມອບເຂົ້າງົບປະມານລ່ວງໜ້າກ່ອນ ໂດຍບໍ່ມີໄມ້ຕົວຈິງຢູ່ລະໜາມ II (ບໍ່ອະນຸຍາດໃຫ້ພະແນກການເງິນ, ຫ້ອງການຄຸ້ມຄອງຊັບສິນຂອງລັດ ອອກໃບສັ່ງມອບເງິນລ່ວງໜ້າ ຢ່າງເດັດຂາດ).

3) ບໍ່ອະນຸຍາດໃຫ້ຫົວໜ່ວຍທຸລະກິດໄມ້ໃດໆ ຕິດໜີ້ຄ້າງຊຳລະເງິນຄ່າພັນທະໄມ້, ຖ້າບໍ່ມີການຊຳລະເງິນຄ່າພັນທະໄມ້ຖືກຕ້ອງຄົບຖ້ວນແລ້ວ ເດັດຂາດບໍ່ອະນຸຍາດໃຫ້ເຈົ້າໜ້າທີ່ຂະແໜງການໃດ ອອກເອກະສານຢັ້ງຢືນເຄື່ອນຍ້າຍໄມ້ອອກຈາກລະໜາມ II ຢ່າງເດັດຂາດ ຖ້າມີການລະເມີດ ແລະ ກວດກາພົບເຫັນຕາມເສັ້ນທາງຂົນສົ່ງ ຈະຕ້ອງໄດ້ດຳເນີນຄະດີ ຕາມລະບຽບກົດໝາຍ ຕໍ່ຜູ້ກະທຳຜິດ.

4) ພາກສ່ວນໃດ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ ໃຫ້ເອົາລາຍຮັບຈາກການຂາຍໄມ້ສະສາງໜີ້ສິນ, ຕ້ອງໄດ້ປະສານສົມທົບ ກັບ ກົມຄຸ້ມຄອງຊັບສິນຂອງລັດ ເພື່ອເຮັດບົດບັນທຶກຮ່ວມກັນ ໃນການສຳລະສະສາງ, ຈາກນັ້ນ ຈຶ່ງນຳສະເໜີງົບປະມານ ເພື່ອຈົດເປັນລາຍຮັບ-ລາຍຈ່າຍງົບປະມານ.

5) ທຸກໆປະເພດລາຍຮັບ ທີ່ໄດ້ຈາກເງິນຂາຍໄມ້ (ເງິນສ່ວນເກີນຈາກປະມູນ, ດອກເບ້ຍ, ຄ່າປັບໃໝ...) ຕ້ອງມອບເຂົ້າເປັນງົບປະມານລວມສູນ ແລ້ວຈຶ່ງຈ່າຍອອກຕາມແຜນງົບປະມານ ທີ່ສະພາຮັບຮອງ ຫຼື ຕາມການຕົກລົງ ຂອງລັດຖະບານ. ສ່ວນໄມ້ທີ່ຂຸດຄົ້ນອອກຈາກປ່າຜະລິດ ທີ່ໄດ້ຜ່ານການຈັດສັນແລ້ວ ໃຫ້ປະຕິບັດຕາມດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 59/ນຍ ລົງວັນທີ 22/05/2002.

6) ເງິນທີ່ໄດ້ຈາກການຂາຍໄມ້ຢຶດ ໃຫ້ມອບເຂົ້າງົບປະມານສູນກາງ 50% ແລະ 50% ມອບເຂົ້າງົບປະມານທ້ອງຖິ່ນ, ສ່ວນຄ່າປັບໃໝ ພາຍຫຼັງຫັກຄ່າສິ້ນເປືອງຕ່າງໆແລ້ວ ມອບເປັນລາຍຮັບຂອງທ້ອງຖິ່ນ 100%.

5. **ການເກັບລາຍຮັບ ຈາກຊັບພະຍາກອນທຳມະຊາດ ແລະ ເຄື່ອງປ່າຂອງດົງ ເຊັ່ນ: ໄມ້ຟືນ, ໄມ້ເພື່ອເຮັດຖ່ານ, ໄມ້ຫຼັກຮົ້ວ, ໄມ້ຄ້ຳແບບ, ເຄື່ອງປ່າຂອງດົງ ລາຍຮັບດັ່ງກ່າວ ເປັນລາຍຮັບງົບປະມານຂອງທ້ອງຖິ່ນ** ໂດຍມອບໃຫ້ພະແນກການເງິນ (ຫ້ອງການຄຸ້ມຄອງຊັບສິນຂອງລັດ) ເປັນຜູ້ຄຸ້ມຄອງ ເກັບລາຍຮັບດັ່ງກ່າວ. ສ່ວນເຄື່ອງປ່າຂອງດົງບາງຊະນິດ ທີ່ປະຊາຊົນລາວບັນດາເຜົ່າ ນຳໄປໃຊ້ສອຍ ແລະ ລ້ຽງຊີບປະຈຳວັນ ທີ່ບໍ່ແມ່ນລັກສະນະສິນຄ້າ ເຊັ່ນ: ໜໍ່ໄມ້, ເຫັດ, ຜັກປ່າ, ຫົວມັນປ່າ, ໝາກໄມ້ປ່າ, ພືດສະໝຸນໄພ, ໝາກຕາວ, ໜໍ່ບຸ່ນ, ໜໍ່ຫວາຍ ແລະ ອື່ນໆ ແມ່ນຍົກເວັ້ນການເກັບຄ່າຊັບພະຍາກອນ ດັ່ງກ່າວ.

6. **ການຄຸ້ມຄອງລາຍຮັບ-ລາຍຈ່າຍ ຂອງກອງທຶນພັດທະນາປ່າໄມ້ ແມ່ນໃຫ້ປະຕິບັດຕາມດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 38/ນຍ ລົງວັນທີ 21/02/2005 ແລະ ບົດແນະນຳຂອງກະຊວງການເງິນ ສະບັບເລກທີ 0885/ກງ ລົງວັນທີ 27/4/2007 ແລະ ລະບຽບຂອງກອງທຶນ ສະບັບເລກທີ 001/ກພປຊ** ລົງວັນທີ 27/02/2008 ວ່າດ້ວຍ ເງິນກອງທຶນພັດທະນາປ່າໄມ້.

7. ເອົາໃຈໃສ່ ປັບປຸງໜ່ວຍງານ ແລະ ພະນັກງານຂອງຕົນ ທີ່ຮັບຜິດຊອບວຽກງານຄຸ້ມຄອງ ເກັບລາຍຮັບຈາກຊັບພະຍາກອນໄມ້ ແລະ ທຸລະກິດໄມ້ຢູ່ທ້ອງຖິ່ນ ໂດຍໃຫ້ປະຕິບັດລະບຽບການປະສານສົມທົບຢ່າງກົມກຽວ ປະຕິບັດໜ້າທີ່ຂອງໃຜລາວ ຢ່າງຈິງຈັງ, ເຂັ້ມງວດ ແລະ ມີຄວາມໂປ່ງໃສ ເດັດດ່ຽວປົກປ້ອງ ສົ່ງເສີມຜູ້ດີມີຄວາມສັດຊື່ ແລະ ຄວາມສາມາດ. ພ້ອມນັ້ນ, ກໍ່ເຂັ້ມງວດຕໍ່ຜູ້ບໍ່ດີ ທີ່ມີການສົມຮູ້ຮ່ວມຄິດ ສວຍໂອກາດຫາຜົນປະໂຫຍດແກ່ຕົນ ຝ່າຝືນກົດລະບຽບລັດຖະກອນ ກໍ່ຄືກົດໝາຍ..

ສົມທົບກັບຂະແໜງກະສິກຳ-ປ່າໄມ້, ຂະແໜງອຸດສາຫະກຳ-ການຄ້າ ປະຕິບັດລະບອບປະຊຸມພົບປະສົນທະນາ ແລກປ່ຽນຄຳຄິດຄຳເຫັນ ເພື່ອນຳສະເໜີທິດທາງ ແລະ ມາດຕະການແກ້ໄຂບັນຫາຕ່າງໆ ທີ່ເກີດໜ່ວງການເກັບເງິນພັນທະຕ່າງໆຈາກໄມ້ ລວມທັງຄົ້ນຄ້ວານຳສະເໜີລັດຖະບານ ເພື່ອພິຈາລະນາຮັບຮອງ

8. ໃຫ້ພະແນກການເງິນປະຈຳແຂວງ, ນະຄອນຫຼວງ ສະຫຼຸບລາຍງານຕົວເລກ ການຈັດຕັ້ງປະຕິບັດແຜນການຂຸດຄົ້ນໄມ້ ທີ່ລັດຖະບານອະນຸມັດຂອງສົກປີ, ການເຮັດສັນຍາຊື້-ຂາຍ, ການເກັບລາຍຮັບເຂົ້າງົບປະມານ ປະຈຳຂອງສົກປີ ຕາມແບບຕາຕະລາງ ຂອງກົມຄຸ້ມຄອງຊັບສິນຂອງລັດ ຄັດຕິດຈັດສົ່ງໃຫ້ ແລະ ເຮັດບົດລາຍງານສະພາບການຈັດຕັ້ງປະຕິບັດຕົວຈິງ ໃນແຕ່ລະເດືອນ, ງວດ, ປີ ຍົກໃຫ້ເຫັນດ້ານດີ, ດ້ານອ່ອນຄົງຄ້າງ ແລະ ສາເຫດໃນແຕ່ລະດ້ານ, ການສົ່ງຕາຕະລາງບົດສະຫຼຸບຕົວເລກລາຍຮັບ ຈາກການຂາຍໄມ້ ແລະ ບົດລາຍງານປະຈຳແຕ່ລະເດືອນ ໃຫ້ກົມຄຸ້ມຄອງຊັບສິນຂອງລັດ ຕ້ອງສົ່ງກ່ອນວັນທີ 15 ຂອງເດືອນຕໍ່ໄປ ເພື່ອຈະໄດ້ສັງລວມລາຍງານ ທ່ານລັດຖະມົນຕີວ່າການກະຊວງການເງິນ ແລະ ລັດຖະບານ ເພື່ອຮັບຊາບ.

9. ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຊີ້ນຳ-ນຳພາພະນັກງານທີ່ຂຶ້ນກັບການຄຸ້ມຄອງຂອງຕົນ ເພື່ອພ້ອມກັນຈັດຕັ້ງປະຕິບັດ ຕາມບົດແນະນຳສະບັບນີ້ ຢ່າງເຂັ້ມງວດ ແລະ ໄດ້ຮັບຜົນເປັນຢ່າງດີ.

10. ບົດແນະນຳສະບັບນີ້ ມີຜົນສັກສິດນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງການເງິນ,

ສົມດີ ດວງດີ